ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ຄະນະນຳທະນາຄານແຫ່ງ ສປປ ລາວ ພົບປະແລກປ່ຽນບົດຮຽນກ່ຽວກັບ ວຽກງານພັດທະນາຕະຫຼາດຫຼັກຊັບ ທີ່ ສສ.ຫວຽດນາມ




ໃນຕອນເຊົ້າຂອງວັນທີ 25 ກໍລະກົດ 2023, ທີ່ ສສ. ຫວຽດນາມ. ຄະນະນຳຈາກ ສປປ ລາວ ນຳໂດຍ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ຮອງປະທານຄະນະກຳມະການຄຸ້ມຄອງຫຼັກຊັບ, ທ່ານນາງ ທິບພະກອນ ຈັນທະວົງສາ ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຄະນະກຳມະການຄຸ້ມຄອງຫຼັກຊັບ ພ້ອມດ້ວຍຄະນະ ໄດ້ເຂົ້າພົບປະ ແລະ ເຮັດວຽກຮ່ວມກັບ ທ່ານ ຫວຽນ ດ໋ອກ ຈີ່, ຮອງລັດຖະມົນຕີ ກະຊວງການເງິນ ສສ. ຫວຽດນາມ ພ້ອມດ້ວຍຄະນະນຳຂອງກະຊວງການເງິນ, ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສສ. ຫວຽດນາມ ເພື່ອແລກປ່ຽນບົດຮຽນກ່ຽວກັບການຊີ້ນຳ-ນຳພາຂອງກະຊວງການເງິນຫວຽດນາມຕໍ່ກັບການຄຸ້ມຄອງລະບົບການເງິນທີ່ແນ່ໃສ່ການພັດທະນາຕະຫຼາດຫຼັກຊັບ ແລະ ຊຸກຍູ້ສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs) ໃຫ້ເຂົ້າຈົດທະບຽນຢູ່ຕະຫຼາດຫຼັກຊັບຫວຽດນາມ. ໃນນີ້, ທ່ານຮອງລັດຖະມົນຕີກະຊວງການເງິນ ໄດ້ແລກປ່ຽນກ່ຽວກັບການວາງນະໂຍບາຍອັນຈຳເປັນຂອງ ສສ. ຫວຽດນາມ ໃນການລະດົມທຶນຜ່ານກົນໄກຕະຫຼາດຫຼັກຊັບ ໂດຍສະເພາະ ການຫັນເປັນທຶນຈຳນວນໜຶ່ງຂອງລັດວິສາຫະກິດລັດລົງທຶນ ເພື່ອໃຫ້ບັນດາລັດວິສາຫະກິດມີເງິນທຶນ ແລະ ມີການບໍລິຫານແບບໂປ່ງໃສ. ພ້ອມດຽວກັນນີ້, ທ່ານ ນາງ

ຟອງຈິນດາ ແສງສຸລິວົງ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ນຳພາວິສາຫະກິດເປົ້າໝາຍຈຳນວນໜຶ່ງຈາກ ສປປ ລາວ ເຂົ້າພົບປະແລກປ່ຽນກັບ ບັນດາບໍລິສັດ ຫຼັກຊັບ ແລະ ບໍລິສັດ ກອງທຶນ ເພື່ອເປັນການເຊື່ອມຕໍ່ການລົງທຶນລະຫວ່າງ ສອງປະເທດ ລາວ ແລະ ສສ. ຫວຽດນາມ ຜ່ານວຽກງານຕະຫຼາດຫຼັກຊັບ. ໂດຍເຫັນໄດ້ເຖິງຄວາມສຳຄັນຂອງການເປັນບໍລິສັດຈົດທະບຽນ ແລະ ຊອກຫາຄູ່ຄ້າທີ່ສຳຄັນໃນການຂະຫຍາຍທຸລະກິດ ແບບຍືນຍົງ, ສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດໃຫ້ແກ່ ສປປ ລາວ.









**# ຂ່າວ: ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ.**

## ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ